ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 201 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 30 ກໍລະກົດ 2018

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ສະຫະພັນນັກຮົບເກົ່າລາວ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ສະບັບເລກທີ 083/ສພຊ, ລົງວັນທີ 13 ມິຖຸນາ 2018 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ສະຫະພັນນັກຮົບເກົ່າລາວ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 03/ຄປຈ, ລົງວັນທີ 11 ກໍລະກົດ 2018.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍ ສະຫະພັນນັກຮົບເກົ່າລາວ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 083 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 13 / 06 / 18

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສະຫະພັນນັກຮົບເກົ່າລາວ

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍສະຫະພັນນັກຮົບເກົ່າລາວ ໃນວາລະກອງປະຊຸມ ຄັ້ງວັນທີ 13 ມິຖຸນາ 2018.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍສະຫະພັນນັກຮົບເກົ່າລາວ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 42 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 13 ມິຖຸນາ 2018

# ກົດໝາຍ
# ວ່າດ້ວຍສະຫະພັນນັກຮົບເກົ່າລາວ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານ ສະຫະພັນນັກຮົບເກົ່າລາວ ເພື່ອຮັບປະກັນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການດັ່ງກ່າວ ໃຫ້ມີປະສິດທິພາບ ແນໃສ່ເຮັດໃຫ້ສະຫະພັນນັກຮົບເກົ່າລາວ ມີຄວາມໜັກແໜ້ນທາງດ້ານການເມືອງ, ເຂັ້ມແຂງທາງດ້ານການຈັດຕັ້ງ, ມີແບບແຜນການເຄື່ອນໄຫວທີ່ດີ, ສາມາດສຶກສາອົບຮົມ, ປຸກລະດົມ ແລະ ເຕົ້າໂຮມຄວາມສາມັກຄີເປັນປຶກແຜ່ນ, ເສີມຂະຫຍາຍມູນເຊື້ອປະຕິວັດ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງສະມາຊິກຕົນ ແລະ ຂອງປະຊາຊົນລາວບັນດາເຜົ່າ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ສະຫະພັນນັກຮົບເກົ່າລາວ**

ສະຫະພັນນັກຮົບເກົ່າລາວ ແມ່ນ ອົງການຈັດຕັ້ງການເມືອງ-ສັງຄົມໜຶ່ງ ຊຶ່ງຢູ່ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ມີພາລະບົດບາດ, ໜ້າທີ່ເຕົ້າໂຮມບັນດາພະນັກງານນັກຮົບເກົ່າ, ເສີມຂະຫຍາຍມູນເຊື້ອຮັກຊາດ ແລະ ເປັນກຳລັງແຮງໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ.

ສະຫະພັນນັກຮົບເກົ່າລາວ ຂຽນຫຍໍ້ວ່າ: “ສນລ”.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ອົງການຈັດຕັ້ງການເມືອງ-ສັງຄົມ** ໝາຍເຖິງ ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ສະຫະພັນແມ່ຍິງລາວ, ສະຫະພັນກຳມະບານລາວ ແລະ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;

2. **ນັກຮົບເກົ່າລາວ** ໝາຍເຖິງ ອະດີດນັກຮົບປະຕິວັດໃນຖັນແຖວກຳລັງປະກອບອາວຸດ ຂອງປະຊາຊົນລາວ;

3. **ຜູ້ເສຍອົງຄະພິເສດ** ໝາຍເຖິງ ຜູ້ທີ່ເສຍກຳລັງແຮງງານ ແຕ່ ແປດສິບເອັດ ສ່ວນຮ້ອຍ ຫາ ໜຶ່ງຮ້ອຍ ສ່ວນຮ້ອຍ;

4. **ອົງການຈັດຕັ້ງສັງຄົມ** ໝາຍເຖິງ ບັນດາສະຫະສະມາຄົມ, ສະມາພັນ, ສະໂມສອນ, ສະມາຄົມ ຫຼື ກຸ່ມທຸລະກິດ.

ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານສະຫະພັນນັກຮົບເກົ່າລາວ

ລັດ ວາງນະໂຍບາຍ, ກົນໄກ ກ່ຽວກັບການຄຸ້ມຄອງ, ການພັດທະນາ, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃນການເຄື່ອນໄຫວວຽກງານ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງການຈັດຕັ້ງ ແລະ ສະມາຊິກສະຫະພັນນັກຮົບເກົ່າລາວ.

ລັດ ສົ່ງເສີມ ໃຫ້ສະມາຊິກສະຫະພັນນັກຮົບເກົ່າລາວ ໄດ້ຮັບຂໍ້ມູນ ຂ່າວສານ, ເຂົ້າເຖິງການບໍລິການດ້ານສາທາລະນະສຸກ ແລະ ການບໍລິການອື່ນ ຢ່າງທົ່ວເຖິງ.

ລັດ ຊຸກຍູ້, ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ສະໜັບສະໜູນ, ລົງທຶນກໍ່ສ້າງໂຄງລ່າງພື້ນຖານ ເປັນຕົ້ນ ສູນຟື້ນຟູ ບຳບັດສຸຂະພາບ ແລະ ການເຄື່ອນໄຫວທາງດ້ານມະນຸດສະທຳ ຂອງສະຫະພັນນັກຮົບເກົ່າລາວ.

ມາດຕາ 5 ຫຼັກການເຄື່ອນໄຫວ ຂອງສະຫະພັນນັກຮົບເກົ່າລາວ

ສະຫະພັນນັກຮົບເກົ່າລາວ ເຄື່ອນໄຫວບົນພື້ນຖານຫຼັກການຕົ້ນຕໍ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ລັດຖະທຳມະນູນ ແລະ ກົດໝາຍ;
2. ຢູ່ພາຍໃຕ້ການນຳພາ, ຊີ້ນຳໂດຍກົງ ຮອບດ້ານ ຂອງພັກປະຊາຊົນປະຕິວັດລາວ;
3. ປະຕິບັດຫຼັກການ ລວມສູນປະຊາທິປະໄຕ;
4. ຮັບປະກັນຄວາມສາມັກຄີປອງດອງ ແລະ ເປັນແບບຢ່າງ ໃນການປົກປັກຮັກສາມູນເຊື້ອປະຕິວັດ.

ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຄື່ອນໄຫວວຽກງານສະຫະພັນນັກຮົບເກົ່າລາວ ໃນຂອບເຂດທົ່ວປະເທດ.

ມາດຕາ 7 ການຮ່ວມມືສາກົນ

ລັດ ສົ່ງເສີມ ການພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສະຫະພັນນັກຮົບເກົ່າລາວ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ການຝຶກອົບຮົມ, ທັດສະນະສຶກສາ ແລະ ຍົກລະດັບຄວາມຮູ້ ຄວາມສາມາດ ທາງດ້ານວິຊາການ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ສະຫະພັນນັກຮົບເກົ່າລາວ

### ໝວດທີ 1
### ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະຫະພັນນັກຮົບເກົ່າລາວ

**ມາດຕາ 8 ທີ່ຕັ້ງ ຂອງສະຫະພັນນັກຮົບເກົ່າລາວ**

ສະຫະພັນນັກຮົບເກົ່າລາວ ເປັນ ອົງການຈັດຕັ້ງການເມືອງ-ສັງຄົມໜຶ່ງ ຢູ່ໃນລະບົບການເມືອງຂອງລະບອບປະຊາທິປະໄຕປະຊາຊົນ ທີ່ມີພັກປະຊາຊົນປະຕິວັດລາວ ເປັນແກນນໍາ, ມີຖານະເທົ່າກັບອົງການຈັດຕັ້ງ ຂອງລັດ ແລະ ອົງການຈັດຕັ້ງການເມືອງ-ສັງຄົມອື່ນ.

**ມາດຕາ 9 ພາລະບົດບາດ ຂອງສະຫະພັນນັກຮົບເກົ່າລາວ**

ສະຫະພັນນັກຮົບເກົ່າລາວ ມີພາລະບົດບາດ ເປັນເສນາທິການໃຫ້ແກ່ສູນກາງພັກ ແລະ ລັດຖະບານ ກ່ຽວກັບວຽກງານຂົນຂວາຍ, ເຕົ້າໂຮມ, ຈັດຕັ້ງ ແລະ ສຶກສາອົບຮົມຖັນແຖວນັກຮົບເກົ່າ ແລະ ປະຊາຊົນລາວບັນດາເຜົ່າ ໃຫ້ຮັກສາທາດແທ້ມູນເຊື້ອປະຕິວັດອັນດີງາມ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງສະມາຊິກຕົນ, ປະກອບສ່ວນເຂົ້າໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 10 ສິດ ແລະ ໜ້າທີ່ ຂອງສະຫະພັນນັກຮົບເກົ່າລາວ**

ສະຫະພັນນັກຮົບເກົ່າລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງ ແລະ ຜັນຂະຫຍາຍ ແນວທາງ, ນະໂຍບາຍ, ຍຸດທະສາດ, ລັດຖະທໍາມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກ່ຽວກັບວຽກງານສະຫະພັນນັກຮົບເກົ່າລາວ ແລະ ມະຕິກອງປະຊຸມໃຫຍ່ ຂັ້ນຂອງຕົນ ໃຫ້ເປັນແຜນການ, ແຜນງານ ແລະ ໂຄງການ ອັນລະອຽດ;
2. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ແນວທາງ, ນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ ໃຫ້ປະຊາຊົນລາວບັນດາເຜົ່າ;
3. ເຕົ້າໂຮມຄວາມສາມັກຄີ ເປັນປຶກແຜ່ນ ຂອງປະຊາຊົນລາວບັນດາເຜົ່າ ແລະ ນັກຮົບເກົ່າລາວ ເຂົ້າຮ່ວມປົກປັກຮັກສາ ແລະ ພັດທະນາເສດຖະກິດ-ສັງຄົມ, ຊ່ວຍເຫຼືອຊຶ່ງກັນ ແລະ ກັນ ທາງດ້ານວັດຖຸ ແລະ ຈິດໃຈ;

4. ເຄື່ອນໄຫວກິດຈະກຳ ທີ່ຖືກຕ້ອງຕາມກົດໝາຍ ເພື່ອສ້າງແຫຼ່ງລາຍຮັບເຂົ້າໃນການພັດທະນາວຽກງານນັກຮົບເກົ່າລາວ;

5. ປະສານສົມທົບກັບບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ເປັນຕົ້ນ ກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ເພື່ອປັບປຸງ, ບູລະນະການຈັດຕັ້ງ ແລະ ສັບຊ້ອນພະນັກງານຕາມກົດໝາຍ ແລະ ລະບຽບການ;

6. ເຂົ້າຮ່ວມປັບປຸງ, ບູລະນະອຳນາດລັດ ປະຊາທິປະໄຕປະຊາຊົນ, ຕິດຕາມ ກວດກາການເຄື່ອນໄຫວຂອງອົງການລັດ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ສະມາຊິກສະຫະພັນນັກຮົບເກົ່າລາວ ແລະ ພະນັກງານ-ລັດຖະກອນ;

7. ຖ່າຍທອດຄວາມຮູ້, ບົດຮຽນ, ປະສົບການ ແລະ ມູນເຊື້ອປະຕິວັດ, ນ້ຳໃຈຮັກຊາດອັນສູງສົ່ງ ຂອງນັກຮົບເກົ່າລາວ ໃຫ້ແກ່ຄົນຮຸ່ນຫຼັງ;

8. ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ເສີມຂະຫຍາຍວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ຂອງຊາດ ແລະ ຂອງເຜົ່າ;

9. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ, ຂອງປະຊາຊົນລາວບັນດາເຜົ່າ ແລະ ເຂົ້າຮ່ວມການໄກ່ເກ່ຍຂໍ້ຂັດແຍ່ງ, ຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ໃນສັງຄົມ;

10. ພົວພັນຮ່ວມມືກັບຕ່າງປະເທດ ຕາມການມອບໝາຍ ຫຼື ຕາມການອະນຸຍາດ;

11. ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານກ່ຽວກັບສະຫະພັນນັກຮົບເກົ່າລາວ ຕໍ່ຂັ້ນເທິງ ແລະພາກສ່ວນທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ການຈັດຕັ້ງ ແລະ ບຸກຄະລາກອນ

### ມາດຕາ 11 ລະບົບການຈັດຕັ້ງ

ລະບົບການຈັດຕັ້ງ ຂອງສະຫະພັນນັກຮົບເກົ່າລາວ ມີ ສີ່ ຂັ້ນ ຄື:

1. ຂັ້ນສູນກາງ ແມ່ນ ສະຫະພັນນັກຮົບເກົ່າແຫ່ງຊາດລາວ;
2. ຂັ້ນແຂວງ ແມ່ນ ສະຫະພັນນັກຮົບເກົ່າ ແຂວງ, ນະຄອນຫຼວງ;
3. ຂັ້ນເມືອງ ແມ່ນ ສະຫະພັນນັກຮົບເກົ່າ ເມືອງ, ເທດສະບານ, ນະຄອນ;
4. ຂັ້ນບ້ານ ແມ່ນ ສະຫະພັນນັກຮົບເກົ່າບ້ານ.

ສຳລັບໂຄງປະກອບການຈັດຕັ້ງ ຂອງສະຫະພັນນັກຮົບເກົ່າລາວ ແຕ່ລະຂັ້ນນັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ ໂດຍອີງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານໃນແຕ່ລະໄລຍະ.

ມາດຕາ 12 ໂຄງປະກອບບຸກຄະລາກອນ

ໂຄງປະກອບບຸກຄະລາກອນ ຂອງສະຫະພັນນັກຮົບເກົ່າລາວ ມີ ດັ່ງນີ້:

1. ສະມາຊິກ ສະຫະພັນນັກຮົບເກົ່າລາວ;
2. ຄະນະບໍລິຫານງານ ສະຫະພັນນັກຮົບເກົ່າລາວ;
3. ປະທານ ສະຫະພັນນັກຮົບເກົ່າລາວ;
4. ຮອງປະທານ ສະຫະພັນນັກຮົບເກົ່າລາວ;
5. ກຳມະການ ສະຫະພັນນັກຮົບເກົ່າລາວ;
6. ປະທານກວດກາ ສະຫະພັນນັກຮົບເກົ່າລາວ;
7. ຮອງປະທານກວດກາ ສະຫະພັນນັກຮົບເກົ່າລາວ.

ສະຫະພັນນັກຮົບເກົ່າລາວ ມີ ປະທານກິດຕິມະສັກ.

ສຳລັບໂຄງປະກອບບຸກຄະລາກອນ ຂອງສະຫະພັນນັກຮົບເກົ່າບ້ານ ມີຫົວໜ້າ ແລະ ຮອງຫົວໜ້າໜ່ວຍ.

## ໝວດທີ 3
## ສະມາຊິກສະຫະພັນນັກຮົບເກົ່າລາວ

**ມາດຕາ 13 ສະມາຊິກສະຫະພັນນັກຮົບເກົ່າລາວ**

ສະມາຊິກສະຫະພັນນັກຮົບເກົ່າລາວ ແມ່ນ ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດ ທີ່ໄດ້ຮັບບຳນານ, ບຳເນັດ ຫຼື ເສຍອົງຄະ ຍ້ອນການສູ້ຮົບ, ຮັບໃຊ້ການສູ້ຮົບ, ການປະຕິບັດໜ້າທີ່ ໃນພາລະກິດຕໍ່ສູ້ປົດປ່ອຍຊາດ, ປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 14 ເງື່ອນໄຂ ແລະ ມາດຕະຖານ ຂອງສະມາຊິກສະຫະພັນນັກຮົບເກົ່າລາວ**

ສະມາຊິກສະຫະພັນນັກຮົບເກົ່າລາວ ມີ ເງື່ອນໄຂ ແລະ ມາດຕະຖານ ດັ່ງນີ້:

1. ເປັນ ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດ ທີ່ໄດ້ຮັບບຳນານ, ບຳເນັດ ຫຼື ເສຍອົງຄະ ຍ້ອນການສູ້ຮົບ, ຮັບໃຊ້ການສູ້ຮົບ ແລະ ການປະຕິບັດໜ້າທີ່ ໃນພາລະກິດຕໍ່ສູ້ປົດປ່ອຍຊາດ, ປົກປັກຮັກສາ ແລະ ພັດທະນາປະເທດຊາດ ຍົກເວັ້ນຜູ້ເສຍອົງຄະພິເສດ;
2. ອະດີດ ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດ ທີ່ສັງກັດໃນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຖືກຍົກຍ້າຍໜ້າທີ່ໄປຢູ່ຝ່າຍພົນລະເຮືອນ ທີ່ໄດ້ຮັບບຳນານ ຫຼື ບຳເນັດ;
3. ມີຄວາມຕື່ນຕົວ, ສະໝັກໃຈເຂົ້າເປັນສະມາຊິກສະຫະພັນນັກຮົບເກົ່າລາວ;
4. ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ຮັກສາໄດ້ມູນເຊື້ອອັນດີງາມ ຂອງຊາດ ແລະ ຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
5. ເປັນແບບຢ່າງໃນການຈັດຕັ້ງປະຕິບັດ ແນວທາງ, ນະໂຍບາຍ ແລະ ກົດໝາຍ;
6. ໄດ້ສັງກັດໃນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຫ້າ ປີ ຂຶ້ນໄປ;

7. ບໍ່ເຄີຍຖືກລົງວິໄນໄລ່ອອກຈາກກຳລັງປະກອບອາວຸດ, ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ໃນສະຖານການກະທຳຜິດໂດຍເຈດຕະນາ.

**ມາດຕາ 15 ການເຄື່ອນໄຫວ ຂອງສະມາຊິກສະຫະພັນນັກຮົບເກົ່າລາວ**

ສະມາຊິກສະຫະພັນນັກຮົບເກົ່າລາວ ເຄື່ອນໄຫວ ຕາມກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳຕ່າງໆ ຂອງສະຫະພັນນັກຮົບເກົ່າລາວ ແຕ່ລະໄລຍະ.

**ມາດຕາ 16 ສິດ ແລະ ໜ້າທີ່ ຂອງສະມາຊິກສະຫະພັນນັກຮົບເກົ່າລາວ**

ສະມາຊິກສະຫະພັນນັກຮົບເກົ່າລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນແບບຢ່າງໃນການເຄົາລົບ ແລະ ປະຕິບັດ ແນວທາງ, ນະໂຍບາຍ, ຍຸດທະສາດ, ລັດຖະທຳມະນູນ, ກົດໝາຍ, ມະຕິ, ຄຳສັ່ງ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ມະຕິກອງປະຊຸມ, ແຜນພັດທະນາ ແລະ ລະບຽບການ ຂອງສະຫະພັນນັກຮົບເກົ່າລາວ;

2. ເປັນເຈົ້າການ ເຕົ້າໂຮມຄວາມສາມັກຄີ, ເສີມຂະຫຍາຍມູນເຊື້ອນັກຮົບປະຕິວັດ, ຊ່ວຍເຫຼືອຊຶ່ງກັນ ແລະ ກັນ, ສຶກສາອົບຮົມຄົນຮຸ່ນໃໝ່ ໃຫ້ຮຽນເອົາຄຸນສົມບັດ, ສິນທຳປະຕິວັດ, ນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ການເຄົາລົບ ແລະ ປະຕິບັດກົດໝາຍ;

3. ຕິດຕາມ ກວດກາ, ເກັບກຳ ແລະ ລາຍງານ ສະພາບພົ້ນເດັ່ນ ໃຫ້ການຈັດຕັ້ງຂັ້ນຂອງຕົນໃນແຕ່ລະໄລຍະ;

4. ເຂົ້າຮ່ວມການເຄື່ອນໄຫວ, ປຶກສາຫາລື ແລະ ປະກອບຄຳເຫັນຕໍ່ວຽກງານຂອງສະຫະພັນນັກຮົບເກົ່າລາວ;

5. ໄດ້ຮັບຂໍ້ມູນ ຂ່າວສານຕ່າງໆ ຕາມເງື່ອນໄຂຕົວຈິງ;

6. ສະເໜີຕໍ່ ການຈັດຕັ້ງສະຫະພັນນັກຮົບເກົ່າລາວ, ການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອປົກປ້ອງ, ຟື້ນຟູສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ທີ່ຖືກລ່ວງລະເມີດ;

7. ເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງເຂົ້າເປັນຄະນະບໍລິຫານງານ ສະຫະພັນນັກຮົບເກົ່າລາວ ໃນແຕ່ລະຂັ້ນ;

8. ເຂົ້າຮ່ວມເຄື່ອນໄຫວວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 17 ພັນທະ ຂອງສະມາຊິກສະຫະພັນນັກຮົບເກົ່າລາວ**

ສະມາຊິກສະຫະພັນນັກຮົບເກົ່າລາວ ມີ ພັນທະ ດັ່ງນີ້:

1. ເຄົາລົບ, ປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ ຂອງສະຫະພັນນັກຮົບເກົ່າລາວ;

2. ສຶກສາອົບຮົມ, ເບິ່ງແຍງ, ຊ່ວຍເຫຼືອຄອບຄົວ ແລະ ລູກຫຼານໃຫ້ເປັນພົນລະເມືອງດີຂອງສັງຄົມ;

3. ເປັນເຈົ້າການ ໃນການພັດທະນາຊີວິດການເປັນຢູ່ພາຍໃນຄອບຄົວຂອງຕົນໃຫ້ດີຂຶ້ນ ແລະ ສ້າງວຽກເຮັດງານທຳ ທີ່ຖືກຕ້ອງຕາມກົດໝາຍ;

4. ເສີມຂະຫຍາຍມູນເຊື້ອການປະຕິວັດ, ເປັນເຈົ້າການໃນການອະນຸລັກ, ສົ່ງເສີມວັດທະນະທຳ ແລະ ຮີດຄອງປະເພນີຂອງຊາດ, ຂອງເຜົ່າ;

5. ປຸກລະດົມຂົນຂວາຍນັກຮົບເກົ່າ ເຂົ້າເປັນສະມາຊິກສະຫະພັນນັກຮົບເກົ່າລາວ;

6. ປະກອບສ່ວນເຂົ້າໃນວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນ;

7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 18 ຜົນປະໂຫຍດ ຂອງສະມາຊິກສະຫະພັນນັກຮົບເກົ່າລາວ**

ສະມາຊິກສະຫະພັນນັກຮົບເກົ່າລາວ ໄດ້ຮັບຜົນປະໂຫຍດ ດັ່ງນີ້:

1. ໄດ້ຮັບນະໂຍບາຍຂອງພັກ, ລັດ ທີ່ວາງອອກ ໃນແຕ່ລະໄລຍະ;

2. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ;

3. ໄດ້ຮັບການຈາລຶກຄຸນງາມຄວາມດີ;

4. ໄດ້ຮັບການເບິ່ງແຍງ, ຊ່ວຍເຫຼືອ ຫຼື ປິ່ນປົວສຸຂະພາບ ໃນເວລາພົບຄວາມຫຍຸ້ງຍາກ, ເຈັບເປັນ, ເສຍຊີວິດ ຕາມນະໂຍບາຍລວມ ແລະ ເງື່ອນໄຂຕົວຈິງ.

ສຳລັບສະມາຊິກສະຫະພັນນັກຮົບເກົ່າລາວ ທີ່ເປັນພະນັກງານບຳນານ ຊຶ່ງໄດ້ຮັບການເລືອກຕັ້ງ ຫຼື ແຕ່ງຕັ້ງເປັນຄະນະບໍລິຫານງານຂັ້ນຕ່າງໆ ຈະໄດ້ຮັບເງິນອຸດໜູນບໍ່ຫຼຸດ ເຈັດສິບ ສ່ວນຮ້ອຍ ຂອງເງິນບຳນານທີ່ຕົນໄດ້ຮັບ.

**ມາດຕາ 19 ການສິ້ນສຸດການເປັນສະມາຊິກສະຫະພັນນັກຮົບເກົ່າລາວ**

ການສິ້ນສຸດການເປັນສະມາຊິກສະຫະພັນນັກຮົບເກົ່າລາວ ມີ ດັ່ງນີ້:

1. ລາອອກ;

2. ຖືກໄລ່ອອກ ຫຼື ຖືກປົດອອກຈາກການເປັນສະມາຊິກ ຍ້ອນການລະເມີດກົດລະບຽບພາຍໃນຂອງສະຫະພັນນັກຮົບເກົ່າລາວ;

3. ເສຍຊີວິດ.

## ໝວດທີ 4
## ຄະນະບໍລິຫານງານສະຫະພັນນັກຮົບເກົ່າລາວ

**ມາດຕາ 20 ຄະນະບໍລິຫານງານສະຫະພັນນັກຮົບເກົ່າລາວ**

ຄະນະບໍລິຫານງານສະຫະພັນນັກຮົບເກົ່າລາວ ໄດ້ຮັບການເລືອກຕັ້ງຈາກກອງປະຊຸມໃຫຍ່ຜູ້ແທນສະຫະພັນນັກຮົບເກົ່າລາວແຕ່ລະຂັ້ນ.

**ມາດຕາ 21 ເງື່ອນໄຂ ແລະ ມາດຕະຖານ ຂອງຄະນະບໍລິຫານງານ ສະຫະພັນນັກຮົບເກົ່າລາວ**

ຄະນະບໍລິຫານງານ ຂອງສະຫະພັນນັກຮົບເກົ່າລາວ ມີ ເງື່ອນໄຂ ແລະ ມາດຕະຖານ ດັ່ງນີ້:

1. ນາຍທະຫານ, ນາຍຕຳຫຼວດ ທີ່ໄດ້ຮັບບຳນານ ຫຼື ຍັງປະຈຳການ;

2. ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ວຽກງານ ຢູ່ສະຫະພັນນັກຮົບເກົ່າລາວ ຕໍ່ເນື່ອງແຕ່ ສິບຫ້າປີ ຂຶ້ນໄປ ແລະ ໄດ້ດໍາລົງຕໍາແໜ່ງບໍລິຫານໃດໜຶ່ງມາກ່ອນ;

3. ມີຄຸນທາດການເມືອງໜັກແໜ້ນ;

4. ມີຄວາມຫ້າວຫັນ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ ທີ່ໄດ້ຮັບມອບໝາຍ;

5. ມີສຸຂະພາບດີ ສາມາດເຄື່ອນໄຫວປະຕິບັດວຽກງານ ສະຫະພັນນັກຮົບເກົ່າລາວ.

ສໍາລັບ ປະທານສະຫະພັນນັກຮົບເກົ່າແຫ່ງຊາດລາວ ແມ່ນ ອະດີດ ນາຍທະຫານ, ນາຍຕໍາຫຼວດ ທີ່ເປັນກໍາມະການສູນກາງພັກ ຫຼື ຊັ້ນນາຍພົນ; ປະທານສະຫະພັນນັກຮົບເກົ່າ ແຂວງ, ນະຄອນຫຼວງ ແມ່ນ ອະດີດ ນາຍທະຫານ, ນາຍຕໍາຫຼວດ ທີ່ເປັນກໍາມະການພັກ ແຂວງ, ນະຄອນຫຼວງ ຫຼື ຊັ້ນພັນໂທ ຂຶ້ນໄປ, ປະທານສະຫະພັນນັກຮົບເກົ່າ ເມືອງ, ເທດສະບານ, ນະຄອນ ແມ່ນ ອະດີດ ນາຍທະຫານ, ນາຍຕໍາຫຼວດ ທີ່ເປັນກໍາມະການພັກ ເມືອງ, ເທດສະບານ, ນະຄອນ ຫຼື ຊັ້ນຮ້ອຍເອກ ຂຶ້ນໄປ; ຫົວໜ້າໜ່ວຍສະຫະພັນນັກຮົບເກົ່າບ້ານ ແມ່ນ ອະດີດ ນາຍທະຫານ, ນາຍຕໍາຫຼວດ ຊັ້ນຮ້ອຍຕີ ຂຶ້ນໄປ; ໃນກໍລະນີ ຫາກບໍ່ມີບຸກຄົນດັ່ງທີ່ກ່າວມານີ້ ກໍສາມາດເອົາບຸກຄົນອື່ນໄດ້ ແຕ່ຕ້ອງໄດ້ຮັບການເຫັນດີຈາກຂັ້ນເທິງຖັດນັ້ນ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງຄະນະບໍລິຫານງານສະຫະພັນນັກຮົບເກົ່າລາວ**

ຄະນະບໍລິຫານງານ ຂອງສະຫະພັນນັກຮົບເກົ່າລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ປະກອບຄໍາເຫັນຕໍ່ ແນວທາງ, ນະໂຍບາຍ, ຍຸດທະສາດ, ກົດໝາຍ ທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງການຈັດຕັ້ງ ແລະ ສະມາຊິກສະຫະພັນນັກຮົບເກົ່າລາວ;

2. ນໍາພາ, ຊີ້ນໍາ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວວຽກງານ ຂອງສະຫະພັນນັກຮົບເກົ່າລາວ;

3. ສະເໜີເລືອກຕັ້ງ ຫຼື ປົດຕໍາແໜ່ງກໍາມະການໃດໜຶ່ງ, ຕົກລົງຍ້ອງຍໍ ຫຼື ລົງວິໄນຕໍ່ສະມາຊິກ ແລະ ພະນັກງານ-ລັດຖະກອນ ຂອງສະຫະພັນນັກຮົບເກົ່າລາວ ຕາມການສະເໜີ ຂອງປະທານກວດກາ;

4. ອອກ ຫຼື ຖອນ ບັດສະມາຊິກສະຫະພັນນັກຮົບເກົ່າລາວ;

5. ປະສານສົມທົບ ແລະ ປຶກສາຫາລືວຽກງານ ຂອງສະຫະພັນນັກຮົບເກົ່າລາວ ກັບພາກສ່ວນອື່ນທີ່ກ່ຽວຂ້ອງ;

6. ໄດ້ຮັບເບ້ຍປະຊຸມຕາມລະບຽບການຂອງກະຊວງການເງິນ ແລະ ນະໂຍບາຍອື່ນ ຕາມກົດລະບຽບພາຍໃນ ຂອງສະຫະພັນນັກຮົບເກົ່າລາວ;

7. ຄຸ້ມຄອງການນໍາໃຊ້ງົບປະມານ ຫຼື ແຫຼ່ງລາຍຮັບຕ່າງໆ ແລະ ຊັບສິນ ຂອງສະຫະພັນນັກຮົບເກົ່າລາວ;

8. ສະຫຼຸບ ແລະ ສະເໜີ ແຜນການເຄື່ອນໄຫວວຽກງານ, ແຜນການ ການເງິນ, ແຜນພັດທະນາວຽກງານ, ກົດລະບຽບພາຍໃນ, ລະບຽບການ ຂອງສະຫະພັນນັກຮົບເກົ່າລາວ;

9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງປະທານສະຫະພັນນັກຮົບເກົ່າລາວ**

ປະທານ ສະຫະພັນນັກຮົບເກົ່າລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳພາ, ຊີ້ນຳລວມ, ຮັບຜິດຊອບວຽກງານການເມືອງແນວຄິດ, ຈັດຕັ້ງຜັນຂະຫຍາຍ ແນວທາງ, ນະໂຍບາຍ, ຍຸດທະສາດ, ມະຕິ, ຄຳສັ່ງ ຂອງພັກ, ລັດ, ມະຕິກອງປະຊຸມ ແລະ ລະບຽບການ ຂອງສະຫະພັນນັກຮົບເກົ່າລາວ ໃຫ້ປາກົດຜົນເປັນຈິງ;

2. ປະສານສົມທົບກັບການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນແມ່ຍິງລາວ, ສະຫະພັນກຳມະບານລາວ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, ການຈັດຕັ້ງສັງຄົມ ແລະ ນິຕິບຸກຄົນທີ່ກ່ຽວຂ້ອງກັບວຽກງານຂອງສະຫະພັນນັກຮົບເກົ່າລາວ;

3. ຊຸກຍູ້, ຊີ້ນຳ, ຕິດຕາມ, ກວດກາ ການຈັດຕັ້ງ, ການເຄື່ອນໄຫວວຽກງານ ຂອງສະຫະພັນນັກຮົບເກົ່າລາວຂັ້ນຂອງຕົນ ແລະ ຂັ້ນລຸ່ມ;

4. ຕົກລົງ, ລົງລາຍເຊັນຮັບຮອງເອກະສານ ແລະ ບັນຫາສຳຄັນ ກ່ຽວກັບວຽກງານຂອງສະຫະພັນນັກຮົບເກົ່າຂັ້ນຂອງຕົນ ແລະ ຂັ້ນລຸ່ມ ບົນພື້ນຖານຄວາມເປັນເອກະພາບຂອງຄະນະ;

5. ລາຍງານສະພາບການເຄື່ອນໄຫວວຽກງານທັງໝົດ ຂອງສະຫະພັນນັກຮົບເກົ່າລາວ ຕໍ່ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 24 ສິດ ແລະ ໜ້າທີ່ ຂອງຮອງປະທານສະຫະພັນນັກຮົບເກົ່າລາວ**

ຮອງປະທານ ສະຫະພັນນັກຮົບເກົ່າລາວ ແຕ່ລະຂັ້ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍປະທານ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານລວມ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍ ຂອງປະທານ;

2. ເປັນຜູ້ຮັກສາການແທນໃນເວລາປະທານສະຫະພັນນັກຮົບເກົ່າລາວ ຕິດຂັດ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງກຳມະການ ສະຫະພັນນັກຮົບເກົ່າລາວ**

ກຳມະການ ສະຫະພັນນັກຮົບເກົ່າລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຜິດຊອບ ລົງເລິກວຽກງານໃດໜຶ່ງ ຕາມການມອບໝາຍ ຂອງຄະນະບໍລິຫານງານສະຫະພັນນັກຮົບເກົ່າລາວຂັ້ນຂອງຕົນ;

2. ເຂົ້າຮ່ວມກອງປະຊຸມ, ປຶກສາຫາລື, ປະກອບຄຳເຫັນ ແລະ ຕົກລົງບັນຫາສຳຄັນຕ່າງໆ ກ່ຽວກັບວຽກງານສະຫະພັນນັກຮົບເກົ່າລາວ ຂັ້ນຂອງຕົນ ແລະ ຂັ້ນລຸ່ມຂອງຕົນ;

3. ເປັນແບບຢ່າງໃນການປົກປັກຮັກສາມູນເຊື້ອປະຕິວັດ, ເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ ແລະ ກົດໝາຍ, ປະກອບສ່ວນສຶກສາອົບຮົມ ແລະ ເຕົ້າໂຮມຄວາມສາມັກຄີພາຍໃນ, ຈັດຕັ້ງປະຕິບັດວຽກງານ ທີ່ໄດ້ຮັບມອບໝາຍ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງປະທານກວດກາ**

ປະທານກວດກາ ມີ ສິດ ແລະ ໜ້າທີ່ ຕາມຂັ້ນ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເຜີຍແຜ່ ຂະຫຍາຍມະຕິ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານກວດກາ ຂອງຂັ້ນເທິງ, ຂັ້ນຂອງຕົນເປັນ ແຜນການ, ໂຄງການ ແລະ ຈັດຕັ້ງປະຕິບັດ;

2. ຕິດຕາມ, ກວດກາ ການເຄື່ອນໄຫວປະຕິບັດໜ້າທີ່, ຄວາມຮັບຜິດຊອບ, ແບບແຜນວິທີເຮັດວຽກ ຂອງຄະນະບໍລິຫານງານ ແລະ ສະມາຊິກສະຫະພັນນັກຮົບເກົ່າລາວ;

3. ຕິດຕາມ ກວດກາ ການຄຸ້ມຄອງ, ນຳໃຊ້ລາຍຮັບ, ວັດຖຸ ແລະ ຊັບສິນ ຂອງສະຫະພັນນັກຮົບເກົ່າລາວ;

4. ຮັບ ແລະ ຄົ້ນຄວ້າຄຳຮ້ອງ, ຄຳສະເໜີ ກ່ຽວກັບການເຄື່ອນໄຫວວຽກງານຂອງສະມາຊິກ, ພະນັກງານ-ລັດຖະກອນ ສະຫະພັນນັກຮົບເກົ່າລາວ;

5. ລາຍງານ ວຽກງານກວດກາ ຕໍ່ກອງປະຊຸມໃຫຍ່ ລວມທັງສະເໜີປັບປຸງ ແລະ ແກ້ໄຂບັນຫາທີ່ເກີດຂຶ້ນ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 27 ສິດ ແລະ ໜ້າທີ່ ຂອງຮອງປະທານກວດກາ**

ຮອງປະທານກວດກາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍປະທານກວດກາ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານລວມ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍ ຂອງປະທານກວດກາ;

2. ເປັນຜູ້ຮັກສາການແທນໃນເວລາປະທານກວດກາ ຕິດຂັດ.

**ມາດຕາ 28 ປະທານກິດຕິມະສັກ**

ປະທານກິດຕິມະສັກ ຂອງສະຫະພັນນັກຮົບເກົ່າລາວ ແມ່ນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຊຶ່ງມີໜ້າທີ່ ຊີ້ນຳການເຄື່ອນໄຫວວຽກງານ ຂອງສະຫະພັນນັກຮົບເກົ່າລາວ.

## ພາກທີ III
## ກອງປະຊຸມສະຫະພັນນັກຮົບເກົ່າລາວ

**ມາດຕາ 29 ປະເພດກອງປະຊຸມສະຫະພັນນັກຮົບເກົ່າລາວ**

ກອງປະຊຸມສະຫະພັນນັກຮົບເກົ່າລາວ ມີ ສາມ ປະເພດ ດັ່ງນີ້:

1. ກອງປະຊຸມໃຫຍ່;
2. ກອງປະຊຸມສາມັນ;
3. ກອງປະຊຸມວິສາມັນ.

**ມາດຕາ 30 ກອງປະຊຸມໃຫຍ່**

ກອງປະຊຸມໃຫຍ່ຜູ້ແທນສະຫະພັນນັກຮົບເກົ່າລາວ ແຕ່ລະຂັ້ນເປີດຂຶ້ນ ຫ້າ ປີໃດ ເທື່ອໜຶ່ງ, ໃນກໍລະນີມີຄວາມຈຳເປັນອາດຈະເປີດ ໄວ ຫຼື ຊ້າ ກວ່າກຳນົດກໍໄດ້ ແຕ່ບໍ່ໃຫ້ເກີນ ສິບສອງ ເດືອນ.

ກອງປະຊຸມໃຫຍ່ຜູ້ແທນສະຫະພັນນັກຮົບເກົ່າລາວ ຂັ້ນໃດ ແມ່ນ ປະທານສະຫະພັນນັກຮົບເກົ່າຂັ້ນນັ້ນ ເປັນຜູ້ຮຽກໂຮມ ໂດຍແຈ້ງໃຫ້ກຳມະການສະຫະພັນນັກຮົບເກົ່າ ຂັ້ນຂອງຕົນ ຮູ້ກ່ອນລ່ວງໜ້າ ຫົກເດືອນ.

**ມາດຕາ 31 ສິດ ແລະ ໜ້າທີ່ ຂອງກອງປະຊຸມໃຫຍ່**

ກອງປະຊຸມໃຫຍ່ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານການເມືອງ, ແຜນພັດທະນາວຽກງານສະຫະພັນນັກຮົບເກົ່າລາວ ຂັ້ນຂອງຕົນ;

2. ຄົ້ນຄວ້າ ພິຈາລະນາ ແລະ ຮັບຮອງເອົາ ການປັບປຸງກົດລະບຽບພາຍໃນຂອງສະຫະພັນນັກຮົບເກົ່າລາວ ສຳລັບກອງປະຊຸມໃຫຍ່ຜູ້ແທນຂອງນັກຮົບເກົ່າລາວ ທົ່ວປະເທດ;

3. ເລືອກຕັ້ງຄະນະບໍລິຫານງານສະຫະພັນນັກຮົບເກົ່າລາວ ຂັ້ນຂອງຕົນ ແລະ ເລືອກຕັ້ງ ຫຼື ຮັບຮອງ ຜູ້ແທນ ຂອງຕົນເຂົ້າຮ່ວມກອງປະຊຸມໃຫຍ່ ຂັ້ນເທິງຖັດຕົນ;

4. ດຳເນີນກອງປະຊຸມຄັ້ງປະຖົມມະລຶກຂອງຄະນະບໍລິຫານງານຊຸດໃໝ່ ເພື່ອຄັດເລືອກເອົາ ປະທານ, ຮອງປະທານ, ປະທານກວດກາ ແລະ ຮອງປະທານກວດກາ;

5. ຮັບຮອງເອົາມະຕິກອງປະຊຸມໃຫຍ່ ສະຫະພັນນັກຮົບເກົ່າ ຂັ້ນຂອງຕົນ.

**ມາດຕາ 32 ກອງປະຊຸມສາມັນ**

ກອງປະຊຸມສາມັນ ແມ່ນ ກອງປະຊຸມຄົບຄະນະບໍລິຫານງານ ສະຫະພັນນັກຮົບເກົ່າລາວ ແຕ່ລະຂັ້ນ ເປີດຂຶ້ນປີລະເທື່ອ ໂດຍແມ່ນປະທານຂັ້ນນັ້ນ ເປັນຜູ້ຮຽກໂຮມປະຊຸມ.

ກ່ອນເປີດກອງປະຊຸມຄົບຄະນະບໍລິຫານງານ ປະທານຂັ້ນນັ້ນ ຕ້ອງແຈ້ງເຖິງຄະນະບໍລິຫານງານຂັ້ນ ຂອງຕົນ ຮັບຊາບກ່ອນສາມເດືອນ, ກອງປະຊຸມສາມັນ ຕ້ອງມີຄະນະບໍລິຫານງານ ເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຈຶ່ງສາມາດເປີດກອງປະຊຸມໄດ້.

ໃນກໍລະນີຈຳເປັນ ກອງປະຊຸມສາມັນ ອາດຈະເປີດ ໄວ ຫຼື ຊ້າ ກວ່າກຳນົດກໍໄດ້ ແຕ່ບໍ່ໃຫ້ເກີນ ສາມເດືອນ.

**ມາດຕາ 33 ສິດ ແລະ ໜ້າທີ່ ຂອງກອງປະຊຸມສາມັນ**

ກອງປະຊຸມສາມັນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ຮັບຮອງເອົາ ບົດລາຍງານການເຄື່ອນໄຫວວຽກງານ, ທິດທາງ ແຜນການປະຈຳປີ ຂອງຄະນະບໍລິຫານງານສະຫະພັນນັກຮົບເກົ່າລາວ ຂັ້ນຂອງຕົນ, ຜ່ານແຜນງົບປະມານປະຈຳປີ;

2. ຄົ້ນຄວ້າ ພິຈາລະນາ ແລະ ຮັບຮອງເອົາ ບົດສຳຫຼວດການນຳພາ ຂອງຄະນະບໍລິຫານງານສະຫະພັນນັກຮົບເກົ່າລາວ ຂັ້ນຂອງຕົນ;

3. ດຳເນີນຊີວິດການເມືອງ ພາຍໃນຄະນະບໍລິຫານງານສະຫະພັນນັກຮົບເກົ່າລາວ ຂັ້ນຂອງຕົນ ກ່ຽວກັບການຊີ້ນຳ ນຳພາ ປະຕິບັດວຽກງານປະຈຳປີ;

4. ຄົ້ນຄວ້າ, ສະເໜີແຕ່ງຕັ້ງກຳມະການ ຄະນະບໍລິຫານງານສະຫະພັນນັກຮົບເກົ່າລາວ ທີ່ວ່າງ;

5. ພິຈາລະນາ, ຕົກລົງບັນຫາຕ່າງໆ ກ່ຽວກັບວຽກງານສະຫະພັນນັກຮົບເກົ່າລາວ;

6. ຮັບຮອງເອົາມະຕິກອງປະຊຸມ ສະຫະພັນນັກຮົບເກົ່າລາວ.

**ມາດຕາ 34 ກອງປະຊຸມວິສາມັນ**

ກອງປະຊຸມວິສາມັນ ແມ່ນ ກອງປະຊຸມຄະນະບໍລິຫານງານ ສະຫະພັນນັກຮົບເກົ່າລາວ ແຕ່ລະຂັ້ນ ເພື່ອພິຈາລະນາວຽກງານທີ່ຈຳເປັນ, ສຳຄັນ ແລະ ຮີບດ່ວນ ຕາມການຕົກລົງ ຂອງຄະນະປະທານ ຫຼື ການສະເໜີຂອງຄະນະບໍລິຫານງານຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈຳນວນຄະນະບໍລິຫານງານທັງໝົດ ແລະ ມີຜູ້ເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນຄະນະບໍລິຫານງານ ຂັ້ນຂອງຕົນ ໂດຍແມ່ນປະທານສະຫະພັນນັກຮົບເກົ່າລາວ ຂັ້ນນັ້ນ ເປັນຜູ້ຮຽກໂຮມປະຊຸມ ແລະ ເປັນປະທານກອງປະຊຸມ.

**ມາດຕາ 35 ມະຕິກອງປະຊຸມ**

ກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ ຕ້ອງອອກເປັນມະຕິ ແລະ ມະຕິນັ້ນ ຈະມີຄຸນຄ່າໄດ້ ກໍຕໍ່ເມື່ອໄດ້ມີຄະແນນສຽງຮັບຮອງເອົາຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ.

## ພາກທີ IV
## ຄວາມຮັບຜິດຊອບຂອງລັດ, ສັງຄົມ ແລະ ຄອບຄົວ ຕໍ່ວຽກງານສະຫະພັນນັກຮົບເກົ່າລາວ

**ມາດຕາ 36 ຄວາມຮັບຜິດຊອບຂອງລັດ**

ລັດ ສ້າງເງື່ອນໄຂ, ອຳນວຍຄວາມສະດວກ, ຕອບສະໜອງ ທຶນຮອນ, ພາຫະນະ, ວັດຖຸປະກອນ, ເຕັກນິກດ້ານວິຊາການ, ບຸກຄະລາກອນ ແລະ ໂຄງລ່າງພື້ນຖານ ເພື່ອພັດທະນາສະຫະພັນນັກຮົບເກົ່າລາວ ໃຫ້ຂະຫຍາຍຕົວຮອບດ້ານ ມີຄວາມໜັກແໜ້ນ, ເຂັ້ມແຂງ ແລະ ທັນສະໄໝ ສາມາດເຄື່ອນໄຫວ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 37 ຄວາມຮັບຜິດຊອບຂອງສັງຄົມ**

ສັງຄົມ ມີຄວາມຮັບຜິດຊອບ ໃນການສະໜັບສະໜູນ, ຮ່ວມມື, ສ້າງເງື່ອນໄຂ, ອຳນວຍຄວາມສະດວກ ໃນການເຄື່ອນໄຫວສຶກສາອົບຮົມ, ການເຕົ້າໂຮມຄວາມສາມັກຄີ, ການສະແດງຄວາມກະຕັນຍູຮູ້ບຸນຄຸນ, ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ, ເຂົ້າຮ່ວມໃນການພັດທະນາ ແລະ ຈັດຕັ້ງປະຕິບັດນະໂຍບາຍຂອງລັດຕໍ່ນັກຮົບເກົ່າລາວ.

**ມາດຕາ 38 ຄວາມຮັບຜິດຊອບຂອງຄອບຄົວ**

ຄອບຄົວ ມີຄວາມຮັບຜິດຊອບ ໃນການເບິ່ງແຍງ, ດູແລ, ໃຫ້ຄວາມອົບອຸ່ນ, ສຶກສາອົບຮົມ, ປຶກສາຫາລື, ສ້າງເງື່ອນໄຂ ອໍານວຍຄວາມສະດວກ ແລະ ຊຸກຍູ້ ສົ່ງເສີມ ການເຄື່ອນໄຫວທີ່ເປັນປະໂຫຍດ ຂອງສະມາຊິກ, ສະຫະພັນນັກຮົບເກົ່າລາວ ພ້ອມທັງເປັນແບບຢ່າງ ໃນການດໍາລົງຊີວິດ, ເຄົາລົບ ແລະ ປະຕິບັດ ລັດຖະທໍາມະນູນ, ກົດໝາຍ ແລະ ຮີດຄອງປະເພນີອັນດີງາມຂອງຊາດ.

## ພາກທີ V
## ງົບປະມານ ຂອງສະຫະພັນນັກຮົບເກົ່າລາວ

**ມາດຕາ 39 ແຫຼ່ງລາຍຮັບ**

ສະຫະພັນນັກຮົບເກົ່າລາວ ມີ ແຫຼ່ງລາຍຮັບ ດັ່ງນີ້:

1. ງົບປະມານ ຂອງລັດ;
2. ເງິນບໍາລຸງ ຂອງສະມາຊິກສະຫະພັນນັກຮົບເກົ່າລາວ;
3. ການຊ່ວຍເຫຼືອ ຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ;
4. ລາຍຮັບຈາກການຈັດກິດຈະກໍາຕ່າງໆ;
5. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 40 ການຄຸ້ມຄອງລາຍຮັບ-ລາຍຈ່າຍ**

ສະຫະພັນນັກຮົບເກົ່າລາວ ແຕ່ລະຂັ້ນ ຄຸ້ມຄອງລາຍຮັບ-ລາຍຈ່າຍ ແລະ ຊັບສິນຂອງຕົນ ຢ່າງລວມສູນ ແລະ ເປັນເອກະພາບ, ປະຕິບັດລະບອບບັນຊີ ຕາມກົດໝາຍວ່າດ້ວຍການບັນຊີ, ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ, ຮັບປະກັນຄວາມໂປ່ງໃສ ແລະ ສາມາດກວດສອບໄດ້.

ສໍາລັບ ເງິນບໍາລຸງຂອງສະມາຊິກສະຫະພັນນັກຮົບເກົ່າລາວ ໃຫ້ສະຫະພັນນັກຮົບເກົ່າຂັ້ນບ້ານ ເປັນຜູ້ຄຸ້ມຄອງ ແລະ ນໍາໃຊ້ ຕາມກົດລະບຽບພາຍໃນຂອງສະຫະພັນນັກຮົບເກົ່າລາວ.

**ມາດຕາ 41 ການນໍາໃຊ້ລາຍຮັບ**

ສະຫະພັນນັກຮົບເກົ່າລາວ ແຕ່ລະຂັ້ນ ນໍາໃຊ້ລາຍຮັບຂອງຕົນ ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການພັດທະນາວຽກງານ ຂອງສະຫະພັນນັກຮົບເກົ່າລາວ;
2. ການຈັດກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ;
3. ວຽກງານບໍລິຫານ, ສົ່ງເສີມວິຊາການ ແລະ ປະຕິບັດນະໂຍບາຍອື່ນ;
4. ການເຄື່ອນໄຫວກິດຈະກໍາ ຂອງສະຫະພັນນັກຮົບເກົ່າລາວ;
5. ການປະຕິບັດວຽກງານອື່ນ ຕາມລະບຽບການ.

# ພາກທີ VI
# ຂໍ້ຫ້າມ

**ມາດຕາ 42 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ຊື້ຈ້າງ, ສວຍໃຊ້ ສະມາຊິກ ແລະ ການຈັດຕັ້ງ ຂອງສະຫະພັນນັກຮົບເກົ່າລາວ ໃຫ້ເຄື່ອນໄຫວເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ພັກພວກ ແລະ ການຈັດຕັ້ງຂອງຕົນ;

2. ຂັດຂວາງການເຄື່ອນໄຫວຂອງ ການຈັດຕັ້ງ ແລະ ສະມາຊິກສະຫະພັນນັກຮົບເກົ່າລາວ;

3. ຂົ່ມຂູ່ທາງດ້ານວາຈາ, ໃຊ້ຄວາມຮຸນແຮງຕໍ່ຮ່າງກາຍ, ຈິດໃຈ, ທຳລາຍຊັບສິນ ຂອງສະມາຊິກສະຫະພັນນັກຮົບເກົ່າລາວ;

4. ໃສ່ຮ້າຍປ້າຍສີ, ແບ່ງແຍກຄວາມສາມັກຄີພາຍໃນສະມາຊິກ ແລະ ການຈັດຕັ້ງສະຫະພັນນັກຮົບເກົ່າລາວ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 43 ຂໍ້ຫ້າມສຳລັບສະມາຊິກສະຫະພັນນັກຮົບເກົ່າລາວ**

ຫ້າມ ສະມາຊິກສະຫະພັນນັກຮົບເກົ່າລາວ ມີ ພຶດຕິກຳ ດັ່ງນີ້:

1. ຈັດຕັ້ງເປັນກຸ່ມກ້ອນ, ຊຸມນຸມປະທ້ວງ, ກໍ່ການປັ່ນປ່ວນ, ກໍ່ຄວາມບໍ່ສະຫງົບ, ຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມ ແລະ ການເຄື່ອນໄຫວອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

2. ສວຍໃຊ້ໜ້າທີ່, ຕຳແໜ່ງ, ຄວາມຮັບຜິດຊອບຂອງຕົນ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ແລະ ພັກພວກ;

3. ອວດອ້າງຜົນງານ, ໂຄສະນາ, ເຄື່ອນໄຫວ, ດຳລົງຊີວິດ ທີ່ຂັດກັບ ກົດໝາຍ, ຮີດຄອງປະເພນີອັນດີງາມຂອງຊາດ ແລະ ຂອງເຜົ່າ;

4. ເມີນເສີຍຕໍ່ການປະຕິບັດໜ້າທີ່ ແລະ ພັນທະຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 44 ຂໍ້ຫ້າມສຳລັບຄະນະບໍລິຫານງານ ສະຫະພັນນັກຮົບເກົ່າລາວ**

ຫ້າມຄະນະບໍລິຫານງານ ສະຫະພັນນັກຮົບເກົ່າລາວ ມີ ພຶດຕິກຳ ດັ່ງນີ້:

1. ເມີນເສີຍ, ເລີ່ນເລີ້ ຕໍ່ການປະຕິບັດໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

2. ຮັບ, ລົງວີໄນ ແລະ ລຶບຊື່ ສະມາຊິກສະຫະພັນນັກຮົບເກົ່າລາວ ອອກຈາກການຈັດຕັ້ງຂອງຕົນ ໂດຍບໍ່ຖືກຕ້ອງ;

3. ກີດກັ້ນການເຄື່ອນໄຫວ, ການພັດທະນາ ແລະ ການສົ່ງເສີມຄວາມກ້າວໜ້າ ຂອງສະມາຊິກສະຫະພັນນັກຮົບເກົ່າລາວ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ VII
# ການຄຸ້ມຄອງ ແລະ ການກວດກາ

## ໝວດທີ 1
## ການຄຸ້ມຄອງວຽກງານສະຫະພັນນັກຮົບເກົ່າລາວ

**ມາດຕາ 45 ອົງການຄຸ້ມຄອງ ວຽກງານສະຫະພັນນັກຮົບເກົ່າລາວ**

ອົງການຄຸ້ມຄອງວຽກງານ ສະຫະພັນນັກຮົບເກົ່າລາວ ປະກອບດ້ວຍ:

1. ສະຫະພັນນັກຮົບເກົ່າແຫ່ງຊາດລາວ;
2. ສະຫະພັນນັກຮົບເກົ່າ ແຂວງ, ນະຄອນຫຼວງ;
3. ສະຫະພັນນັກຮົບເກົ່າ ເມືອງ, ເທດສະບານ, ນະຄອນ;
4. ສະຫະພັນນັກຮົບເກົ່າ ບ້ານ.

**ມາດຕາ 46 ສິດ ແລະ ໜ້າທີ່ ຂອງສະຫະພັນນັກຮົບເກົ່າແຫ່ງຊາດລາວ**

ໃນການຄຸ້ມຄອງວຽກງານ ສະຫະພັນນັກຮົບເກົ່າແຫ່ງຊາດລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານສະຫະພັນນັກຮົບເກົ່າລາວ ເພື່ອສະເໜີລັດຖະບານ ແລະ ສະພາແຫ່ງຊາດ ພິຈາລະນາ;

2. ຜັນຂະຫຍາຍ ແນວທາງ ນະໂຍບາຍ, ຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານສະຫະພັນນັກຮົບເກົ່າລາວ ໃຫ້ເປັນລະບຽບການ, ແຜນງານ, ແຜນການ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ແນວທາງ ນະໂຍບາຍ, ຍຸດທະສາດ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

4. ຕິດຕາມ, ກວດກາ ການເຄື່ອນໄຫວຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກສະພາແຫ່ງຊາດ;

5. ສຶກສາອົບຮົມ ການເມືອງ-ແນວຄິດ, ເຕົ້າໂຮມຄວາມສາມັກຄີ, ອະນຸລັກຮັກສາ ແລະ ສົ່ງເສີມວັດທະນະທຳຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ ແລະ ມູນເຊື້ອຂອງນັກຮົບເກົ່າລາວ;

6. ນຳພາ, ຊີ້ນຳ, ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍ, ມະຕິ, ຄຳສັ່ງ ແລະ ຄຳແນະນຳ ກ່ຽວກັບວຽກງານນັກຮົບເກົ່າລາວ ໃນທົ່ວປະເທດ;

7. ພິຈາລະນາ, ສະເໜີ ການສ້າງຕັ້ງ, ປັບປຸງ, ຍຸບເລີກການຈັດຕັ້ງ ແລະ ບັນດານິຕິກຳ ຂອງຄະນະບໍລິຫານງານສະຫະພັນນັກຮົບເກົ່າລາວ ຂັ້ນຂອງຕົນ ແລະ ຂັ້ນລຸ່ມ ທີ່ເຫັນວ່າຂັດກັບກົດໝາຍ;

8. ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ບຸກຄະລາກອນ ຂອງສະຫະພັນນັກຮົບເກົ່າລາວ;

9. ຄົ້ນຄວ້າ, ພິຈາລະນາ, ສະເໜີແຕ່ງຕັ້ງ, ຍົກຍ້າຍ, ປະຕິບັດນະໂຍບາຍຕໍ່ພະນັກງານຂັ້ນຂອງຕົນ ທີ່ມີຜົນງານດີເດັ່ນ, ລົງວິໄນຕໍ່ສະມາຊິກ ແລະ ພະນັກງານ-ລັດຖະກອນ ສະຫະພັນນັກຮົບເກົ່າລາວ;

10. ອອກ ຫຼື ຖອນບັດສະມາຊິກ ສະຫະພັນນັກຣົບເກົ່າລາວ;

11. ຮັບຄໍາສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອພິຈາລະນາແກ້ໄຂຕາມສິດ ແລະ ໜ້າທີ່ຂອງຕົນ;

12. ຊອກລາຍຮັບ ດ້ວຍຮູບການຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ;

13. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສະຫະພັນນັກຣົບເກົ່າລາວ;

14. ປະສານສົມທົບກັບ ບັນດາກະຊວງ, ອົງການຈັດຕັ້ງ ພັກ, ລັດ, ແນວລາວສ້າງຊາດ, ສະຫະພັນແມ່ຍິງລາວ, ສະຫະພັນກໍາມະບານລາວ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານຂອງຕົນ;

15. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານສະຫະພັນນັກຣົບເກົ່າແຫ່ງຊາດລາວ ຕໍ່ຂັ້ນເທິງ;

16. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 47 ສິດ ແລະ ໜ້າທີ່ ຂອງສະຫະພັນນັກຣົບເກົ່າ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານສະຫະພັນນັກຣົບເກົ່າ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແນວທາງ ນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ກົດໝາຍ, ລະບຽບການ, ມະຕິ, ຄໍາສັ່ງ, ແຈ້ງການ ແລະ ຄໍາແນະນໍາ ຂອງຂັ້ນເທິງ;

2. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ແນວທາງ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ລະບຽບການ, ມະຕິ, ຄໍາສັ່ງ, ແຈ້ງການ ແລະ ຄໍາແນະນໍາ ຂອງຂັ້ນເທິງ ໃຫ້ແກ່ສະມາຊິກສະຫະພັນນັກຣົບເກົ່າລາວ;

3. ຕິດຕາມ, ກວດກາ ການເຄື່ອນໄຫວຂອງ ສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ;

4. ສຶກສາອົບຮົມ ການເມືອງ-ແນວຄິດ, ເຕົ້າໂຮມຄວາມສາມັກຄີ, ອະນຸລັກຮັກສາ ແລະ ສົ່ງເສີມວັດທະນະທໍາຮີດຄອງປະເພນີອັນດີງາມຂອງຊາດ, ຂອງຊົນເຜົ່າ ແລະ ມູນເຊື້ອຂອງນັກຣົບເກົ່າລາວ;

5. ຄົ້ນຄວ້າ, ປະກອບຄໍາເຫັນຕໍ່ນະໂຍບາຍ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ວຽກງານສະຫະພັນນັກຣົບເກົ່າລາວ;

6. ພິຈາລະນາ, ສະເໜີ ແນະນໍາການສ້າງຕັ້ງ, ປັບປຸງ, ຍຸບເລີກການຈັດຕັ້ງ ແລະ ບັນດານິຕິກໍາ ຂອງຄະນະບໍລິຫານງານ ສະຫະພັນນັກຣົບເກົ່າລາວ ຂັ້ນຂອງຕົນ ແລະ ຂັ້ນລຸ່ມ ທີ່ເຫັນວ່າຂັດກັບກົດໝາຍ;

7. ຄົ້ນຄວ້າ, ພິຈາລະນາ, ສະເໜີແຕ່ງຕັ້ງ, ຍົກຍ້າຍ, ປະຕິບັດນະໂຍບາຍຕໍ່ພະນັກງານຂັ້ນຂອງຕົນ ທີ່ມີຜົນງານດີເດັ່ນ, ລົງວິໄນຕໍ່ສະມາຊິກ ແລະ ພະນັກງານ-ລັດຖະກອນ ຂັ້ນຂອງຕົນ ແລະ ຂັ້ນລຸ່ມ;

8. ສະເໜີຂັ້ນເທິງ ອອກບັດ ຫຼື ຖອນບັດ ສະມາຊິກສະຫະພັນນັກຣົບເກົ່າລາວ;

9. ພິຈາລະນາແກ້ໄຂຄໍາສະເໜີ ຂອງນັກຣົບເກົ່າລາວ ຕາມຂອບເຂດ ສິດ ແລະ ໜ້າທີ່ຂອງຕົນ;

10. ຄົ້ນຄວ້າ ຊອກຫາລາຍຮັບ ດ້ວຍຮູບການຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ;

11. ປະສານສົມທົບກັບອົງການຈັດຕັ້ງ ພັກ-ລັດ, ແນວລາວສ້າງຊາດ, ສະຫະພັນແມ່ຍິງລາວ, ສະຫະພັນກຳມະບານລາວ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຂັ້ນຂອງຕົນ;

12. ພົວພັນຮ່ວມມືກັບຕ່າງປະເທດ ຕາມການມອບໝາຍຂອງຂັ້ນເທິງ;

13. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານສະຫະພັນນັກຮົບເກົ່າຂັ້ນຂອງຕົນ ຕໍ່ຂັ້ນເທິງ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 48 ສິດ ແລະ ໜ້າທີ່ ຂອງສະຫະພັນນັກຮົບເກົ່າ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານສະຫະພັນນັກຮົບເກົ່າ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແນວທາງ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ມະຕິ, ຄຳສັ່ງ, ແຈ້ງການ ແລະ ຄຳແນະນຳ ຂອງຂັ້ນເທິງ;

2. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມ ແນວທາງ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ມະຕິ, ຄຳສັ່ງ, ແຈ້ງການ ແລະ ຄຳແນະນຳ ຂອງພັກ, ລັດ, ສະຫະພັນນັກຮົບເກົ່າລາວ ຂັ້ນເທິງໃຫ້ແກ່ນັກຮົບເກົ່າລາວ;

3. ສຶກສາອົບຮົມ ການເມືອງ-ແນວຄິດ, ເຕົ້າໂຮມຄວາມສາມັກຄີ, ອະນຸລັກຮັກສາ ແລະ ສົ່ງເສີມວັດທະນະທຳຮີດຄອງປະເພນີອັນດີງາມຂອງຊາດ, ຂອງຊົນເຜົ່າ ແລະ ມູນເຊື້ອຂອງນັກຮົບເກົ່າລາວ;

4. ສ້າງ, ປັບປຸງສະຫະພັນນັກຮົບເກົ່າລາວ ໃຫ້ມີຄວາມເຂັ້ມແຂງ, ຂະຫຍາຍ ຫຼື ຍຸບເລີກການຈັດຕັ້ງ ສະຫະພັນນັກຮົບເກົ່າລາວຂັ້ນຂອງຕົນ ແລະ ຂັ້ນລຸ່ມ;

5. ຕິດຕາມ, ຊຸກຍູ້ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານສະຫະພັນນັກຮົບເກົ່າລາວ ຂັ້ນຂອງຕົນ ແລະ ຂັ້ນບ້ານ ໃຫ້ເຂັ້ມແຂງ;

6. ຄົ້ນຄວ້າ, ພິຈາລະນາ, ສະເໜີແຕ່ງຕັ້ງ, ຍົກຍ້າຍ, ປະຕິບັດນະໂຍບາຍຕໍ່ພະນັກງານຂັ້ນຂອງຕົນ ທີ່ມີຜົນງານດີເດັ່ນ, ລົງວິໄນຕໍ່ສະມາຊິກ ແລະ ພະນັກງານ-ລັດຖະກອນ ຂັ້ນຂອງຕົນ ແລະ ຂັ້ນລຸ່ມ;

7. ສະເໜີຂັ້ນເທິງ ອອກ ຫຼື ຖອນ ບັດສະມາຊິກສະຫະພັນນັກຮົບເກົ່າລາວ;

8. ພິຈາລະນາແກ້ໄຂຄຳສະເໜີ ຂອງນັກຮົບເກົ່າລາວ ຕາມຂອບເຂດ ສິດ ແລະ ໜ້າທີ່ຂອງຕົນ;

9. ຄົ້ນຄວ້າ ຊອກຫາລາຍຮັບ ດ້ວຍຮູບການຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ;

10. ປະສານສົມທົບກັບອົງການຈັດຕັ້ງ ພັກ, ລັດ, ແນວລາວສ້າງຊາດ, ສະຫະພັນແມ່ຍິງລາວ, ສະຫະພັນກຳມະບານລາວ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຂັ້ນຂອງຕົນ;

11. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານສະຫະພັນນັກຮົບເກົ່າຂັ້ນຂອງຕົນ ຕໍ່ຂັ້ນເທິງ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 49 ສິດ ແລະ ໜ້າທີ່ ຂອງສະຫະພັນນັກຮົບເກົ່າ ບ້ານ**

ໃນການຄຸ້ມຄອງວຽກງານສະຫະພັນນັກຮົບເກົ່າ ບ້ານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງ ເຜີຍແຜ່ ແລະ ສຶກສາອົບຮົມ ແນວທາງ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ມະຕິ, ຄຳສັ່ງ, ແຈ້ງການ ແລະ ຄຳແນະນຳ ຂອງຂັ້ນເທິງ ໃຫ້ແກ່ສະມາຊິກສະຫະພັນນັກຮົບເກົ່າລາວ ພາຍໃນບ້ານ;

2. ເຕົ້າໂຮມ ຄວາມສາມັກຄີເປັນປຶກແຜ່ນ, ເປັນແບບຢ່າງ, ນຳພາການສ້າງຂະບວນການຂອງຖັນແຖວນັກຮົບເກົ່າລາວ ໂດຍຕິດພັນກັບການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

3. ເຂົ້າຮ່ວມໃນການແກ້ໄຂປາກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນພາຍໃນບ້ານ;

4. ສະເໜີ ແຕ່ງຕັ້ງ, ຍົກຍ້າຍ, ປະຕິບັດນະໂຍບາຍຕໍ່ສະມາຊິກຂອງຕົນ ທີ່ມີຜົນງານດີເດັ່ນ ແລະ ລົງວິໄນ ຕໍ່ຜູ້ລະເມີດ;

5. ປະສານສົມທົບກັບອົງການຈັດຕັ້ງອື່ນ, ຄອບຄົວ ໃນການປັບປຸງ, ກໍ່ສ້າງສະຫະພັນນັກຮົບເກົ່າບ້ານ ໃຫ້ເຕີບໃຫຍ່ເຂັ້ມແຂງ;

6. ນຳພາ ສະມາຊິກສະຫະພັນນັກຮົບເກົ່າລາວ ສ້າງເສດຖະກິດຄອບຄົວ, ປົວແປງຊີວິດການເປັນຢູ່ ຂອງນັກຮົບເກົ່າ ແລະ ສ້າງລາຍຮັບດ້ວຍຮູບການຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ;

7. ສະຫຼຸບ ແລະ ລາຍງານການເຄື່ອນໄຫວ ວຽກງານສະຫະພັນນັກຮົບເກົ່າບ້ານ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ການກວດກາ

**ມາດຕາ 50 ອົງການກວດກາ**

ອົງການກວດກາວຽກງານສະຫະພັນນັກຮົບເກົ່າລາວ ປະກອບດ້ວຍ:

1. ອົງການກວດການພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງ ວຽກງານສະຫະພັນນັກຮົບເກົ່າລາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 45 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດ ແລະ ອົງການກວດສອບແຫ່ງລັດ.

**ມາດຕາ 51 ເນື້ອໃນການກວດກາ**

ການກວດກາ ມີ ເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດໜ້າທີ່, ຄວາມຮັບຜິດຊອບ ແລະ ແບບແຜນວິທີເຮັດວຽກຂອງຄະນະບໍລິຫານງານ ແລະ ສະມາຊິກ ໃນການປະຕິບັດກົດໝາຍ, ລະບຽບການ ຂອງສະຫະພັນນັກຮົບເກົ່າລາວ, ມະຕິກອງປະຊຸມ ຂັ້ນຂອງຕົນ ແລະ ຂັ້ນລຸ່ມ;

2. ການອອກມະຕິ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ, ແຜນການ ຂອງສະຫະພັນນັກຮົບເກົ່າລາວ;

3. ການຄຸ້ມຄອງ, ການນຳໃຊ້, ການປະຕິບັດນະໂຍບາຍ ລວມທັງການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງການຈັດຕັ້ງ ແລະ ສະມາຊິກສະຫະພັນນັກຮົບເກົ່າລາວ;

4. ການຄຸ້ມຄອງ, ການນຳໃຊ້ງົບປະມານ, ວັດຖຸປະກອນ ແລະ ຊັບສິນ ຂອງການຈັດຕັ້ງຂັ້ນຂອງຕົນ.

**ມາດຕາ 52 ຮູບການ ການກວດກາ**

ການກວດກາມີ ສາມ ຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການ ຂອງຄະນະກວດກາແຕ່ລະຂັ້ນ;

2. ການກວດກາໂດຍແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນ ການກວດກາຕາມຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ຂອງຄະນະກວດກາ ແລະ ຄຳສະເໜີ ຂອງສະຫະພັນນັກຮົບເກົ່າລາວ ແຕ່ລະຂັ້ນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາ ຊາບລ່ວງໜ້າ.

## ພາກທີ VIII
## ວັນສ້າງຕັ້ງ, ເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ

**ມາດຕາ 53 ວັນສ້າງຕັ້ງ ສະຫະພັນນັກຮົບເກົ່າລາວ**

ວັນສ້າງຕັ້ງ ສະຫະພັນນັກຮົບເກົ່າລາວ ແມ່ນ ວັນທີ 9 ກັນຍາ 2002.

ສະຫະພັນນັກຮົບເກົ່າລາວ ຈັດຕັ້ງສະເຫຼີມສະຫຼອງວັນດັ່ງກ່າວ ໃນແຕ່ລະປີ ເພື່ອທວນຄືນມູນເຊື້ອຮັກຊາດພິລະອາດຫານ ຂອງຊາດ ແລະ ຂອງນັກຮົບເກົ່າລາວ.

**ມາດຕາ 54 ເຄື່ອງໝາຍ ແລະ ເຄື່ອງແບບ**

ສະຫະພັນນັກຮົບເກົ່າລາວ ມີ ທຸງ, ເຄື່ອງໝາຍ, ກາໝາຍ, ສັນຍາລັກ ແລະ ເຄື່ອງແບບ ທີ່ຖືກຮັບຮອງເອົາໃນກອງປະຊຸມໃຫຍ່ຜູ້ແທນສະຫະພັນນັກຮົບເກົ່າລາວທົ່ວປະເທດ.

**ມາດຕາ 55 ຕາປະທັບ**

ສະຫະພັນນັກຮົບເກົ່າລາວ ແຕ່ລະຂັ້ນ ມີ ຕາປະທັບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 56 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 57 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 58 ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສະຫະພັນນັກຮົບເກົ່າລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 59 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດນັບແຕ່ວັນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້